ການຂະຫຍາຍ ເຕັກນິກ ການຈັດການຄຸ້ມຄອງ ທີ່ດິນແບບຍືນຍົງ

ໂດຍຊາວກະສິກອນ ຂະໜາດນ້ອຍ

ບັນຫາທີ່ຢາກແກ້ໄຂ:

ສະພາບການຜະລິດກະສິກໃນສປປລາວ ໂດຍສະເພາະໃນເຂດພູດອຍ ແມ່ນໄດ້ມີການປ່ຽນແປງຈາກຮູບແບບການຜະລິດແບບກຸ້ມກິນ ໄປສູ່ການຜະລິດເປັນສິນຄ້າ ໂດຍນຳໃຊ້ປັດໃຈການຜະລິດເປັນຈຳນວນຫຼວງຫຼາຍ ເພື່ອເຮັດໃຫ້ໄດ້ຮັບຜົນຫຼາຍທີ່ສຸດໃນໄລຍະເວລາສັ້ນໆ ຊຶ່ງມັນໄດ້ສົ່ງຜົນກະທົບຕໍ່ຊັບພະຍາກອນທຳມະຊາດ. ການຈັດຕັ້ງປະຕິບັດກິດຈະກຳການຜະລິດເຫຼົ່ານັ້ນ ເປັນການຜະລິດກະສິກຳແບບບໍ່ຍືນຍົງທີ່ເປັນສາເຫດເຮັດໃຫ້ຊັບພະຍາກອນດິນເຊື່ອມໂຊມ. ນອກຈາກນັ້ນກໍ່ຍັງມີສິ່ງທ້າທາຍທີ່ເກີດຈາກການປ່ຽນແປງສະພາບດິນຟ້າອາກາດ. ຜ່ານມາມີຫຼາຍໆເຕັກນິກການຈັດການຄຸ້ມຄອງທີ່ດິນແບບຍືນຍົງ ທີ່ໄດ້ຈັດຕັ້ງປະຕິບັດໂດຍຊາວກະສິກອນຂະໜາດນ້ອຍມາເປັນເວລາດົນນານຊຶ່ງເຫັນໄດ້ວ່າ ມີບາງບົດຮຽນເຕັກນິກ ແມ່ນໄດ້ຮັບການສ້າງເປັນເອກກະສານຂອງແຕ່ລະອົງການ ຫຼື ທ້ອງການຕ່າງໆ. ເຖິງຢ່າງໃດກໍ່ຕາມ, ເອກະສານບົດຮຽນດັ່ງກ່າວແມ່ນຍັງຈຳກັດ ແລະ ເນື້ອໃນຂອງເອກະສານສ່ວນໃຫຍ່ ຈະມີຮູບແບບມາດຕະຖານທີ່ແຕກຕ່າງກັນຂອງແຕ່ລະອົງການ.

ກິດຈະກຳ:

- ສ້າງເອກກະສານ ແລະ ສັງລວມ ບັນດາເຕັກນິກການຈັດການຄຸ້ມຄອງທີ່ດິນແບບຍືນຍົງທີ່ດີ ໄວ້ໃນຖານຂໍ້ມູນ ເພື່ອເປັນຄັງຄວາມຮູ້ໂດຍຫຼາຍໆອົງກອນ ຫຼື ບຸກຄົນ ສາມາດເຂົ້າເຖິງ ແລະ ນຳໃຊ້ໄດ້ໂດຍການນຳໃຊ້ຄູ່ມື ແບບສອບຖາມທີ່ເປັນມາດຕະຖານ ຈາກອົງການ WOCAT (WOCAT tools).
- ຂະຫຍາຍ ແລະ ເຜີຍແຜ່ ເຕັກນິກການຈັດການຄຸ້ມຄອງທີ່ດິນແບບຍືນຍົງດັ່ງກ່າວ ອອກສູ່ວົງກວ້າງ ເພື່ອໃຫ້ທຸກພາກສ່ວນສາມາດເຂົ້າເຖິງ ເອກກະສານເຕັກນິກ ແລະ ເຂົ້າໃຈກ່ຽວກັບເນື້ອໃນ ເພື່ອຊ່ວຍສະໜັບສະໜຸນໃຫ້ຂະບວນການຕັດສິນໃຈ.

ຜົນໄດ້ຮັບ:

ຜົນທີ່ໄດ້ຮັບ ຈາກການສ້າງເອກກະສານ ເຕັກນິກການຈັດການຄຸ້ມຄອງທີ່ດິນແບບຍືນຍົງສັງລວມ ແລະ ລົງໄວ້ໃນຖານຂໍ້ມູນອອນລາຍ ຂອງ WOCAT database **https://www.wocat.net/global-slm-database** ແລະ **LaoCAT http://laocat.nafri.org.la** ເພື່ອສັງລວມໄວ້ເປັນຄັງຄວາມຮູ້ໃຫ້ແກ່ທຸກພາກສ່ວນສາມາດເຂົ້າເຖິງ ບົດຮຽນເຕັກນິກໄດ້ ແລະ ສາມາດນຳເອົາບົດຮຽນ ການຈັດຕັ້ງປະຕິບັດທີ່ດີ ມາໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳການຜະລິດ ທີ່ພົບກັບບັນຫາໄພຂົ່ມຂູ່ ຈາກການປ່ຽນແປງສະພາບດິນຟ້າອາກາດ ແລະ ບັນຫາດິນເຊື່ອມໂຊມ. ນອກຈາກນັ້ນ, ກໍ່ຍັງເປັນການຂະຫຍາຍບົດຮຽນ ເຕັກນິກການຈັດການຄຸ້ມຄອງ ທີ່ດິນແບບຍືນຍົງ ອອກສູ່ວົງກວ້າງ.



ສະໜັບສະໜຸນໂດຍ:

ບໍລິການ-ສົ່ງເສີມກະສິກຳຮອບດ້ານ LURAS Lao Upland Rural Advisory Service